## ຄວາມເປັນມາຂອງ ທລຍ

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ແມ່ນການຈັດຕັ້ງໃໝ່ພາຍໃຕ້ຄວາມພະຍາຍາມຂອງລັດຖະບານໃນການຫລຸດຜ່ອນຄວາມທຸກຍາກຂອງປະຊາຊົນບັນດາເຜົ່າຕາມມະຕິຂອງກອງປະຊຸມ ໃຫຍ່ຄັ້ງທີ 7 ຂອງສູນກາງພັກ, ໂດຍການສະຫນັບສະຫນູນຂອງທະນາຄານໂລກ **(ເງິນກູ້ຢືມ ເລກທີ 3675 LA)** ເພື່ອປະກອບສ່ວນເຂົ້າໃນວຽກງານພັດທະນາເສດຖະກິດ-ສັງຄົມໃນການລຶບລ້າງຄວາມທຸກຍາກໃຫ້ປະຊາຊົນລາວ ໂດຍສະເພາະປະຊາຊົນບັນດາເຜົ່າທີ່ອາໃສຢູ່ເຂດຫ່າງໄກສອກຫລີກ. ທລຍ ໄດ້ຖືກສ້າງຕັ້ງຂື້ນ **ໂດຍດຳລັດເລກທີ 073/ນຍ** ລົງວັນທີ 31 ພຶດສະພາ 2002 ແລະ ບັນລຸເງື່ອນໄຂສັນຍາເງິນກູ້ ໂດຍເລີ່ມຕົ້ນໂຄງການຢ່າງເປັນທາງການ ແຕ່ວັນທີ 03 ເດືອນກຸມພາ 2003 ເປັນຕົ້ນມາໂດຍມີໄລຍະຈັດຕັ້ງປະຕິບັດ 5 ປີ

## ຈຸດປະສົງ ຂອງ ທລຍ

- ສ້າງຂີດຄວາມສາມາດ ເພື່ອມອບສິດໃຫ້ຊາວບ້ານທຸກຍາກເປັນຜູ້ວາງແຜນ, ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງທຸກການລົງທຶນຢູ່ໃນໝູ່ບ້ານດ້ວຍຕົນເອງ ຕາມຮູບແບບການແບ່ງຂັ້ນຄຸ້ມຄອງ ແລະ ຄວາມໂປ່ງໃສເປັນຫລັກ.
- ສ້າງຄວາມເຂັ້ມແຂງ ໃຫ້ແກ່ສະຖາບັນ, ສະໜັບສະໜູນຂະບວນການຕັດສິນໃຈ ແລະ ການແກ້ໄຂຂໍ້ຂັດແຍ່ງແບບມີສ່ວນຮ່ວມຕັ້ງແຕ່ຂັ້ນບ້ານ, ເຂດ ແລະ ເມືອງ ໂດຍໃຫ້ມີສ່ວນກ່ຽວຂ້ອງຢ່າງກ້ວາງຂວາງ ຂອງຊາວບ້ານ, ໂດຍສະເພາະເພດຍິງ ແລະ ຊົນເຜົ່າສ່ວນນ້ອຍ.
- ຊ່ວຍເຫລືອຊາວບ້ານ ໃນການພັດທະນາໂຄງລ່າງຂະໜາດນ້ອຍ ແລະ ໃຫ້ເຂົາເຈົ້າໄດ້ຮັບການບໍລິການດ້ານຕ່າງໆຕາມຄວາມຈຳເປັນ ແລະ ເໝາະສົມ.

## ແຜນການຈັດຕັ້ງປະຕິບັດຂອງ ທລຍ

| ແຂວງ | 2003 | 2004 | 2005 | 2006 | 2007 | ລວມ |
|---|---|---|---|---|---|---|
| ຫົວພັນ | 3 | 3 | 5 | 8 | 8 | 8 |
| ສະຫວັນນະເຂດ | 3 | 3 | 3 | 4 | 4 | 4 |
| ຈຳປາສັກ | 4 | 4 | 4 | 4 | 4 | 4 |
| ແຂວງທີ 4 | - | 2 | 4 | 4 | 4 | 4 |
| ແຂວງທີ 5 | - | 2 | 4 | 4 | 4 | 4 |
| ຈຳນວນເມືອງ | 10 | 14 | 20 | 24 | 24 | 24 |

### ສຳນັກງານ




**ຄະນະກຳມະການແຜນການ ແລະ ການລົງທຶນ**

**ຖະໜົນຫລວງພະບາງ, ຕູ້ ປ.ນ 4625**

**ນະຄອນຫລວງວຽງຈັນ, ສປປ ລາວ**

ໂທ: 021-261 476, 261 479, 261 480

ແຟັກ: 021-261 481

ອີເມລ: prflao@laotel.com

info@prflaos.org

**www.prflaos.org**


# ສຳນັກງານນາຍົກລັດຖະມົນຕີ

# ບົດສະຫລຸບຫຍໍ້ຂອງວຽກງານ ກອງທຶນຫລຸດຜ່ອນຄວາມທຸກຍາກ(ທລຍ)



**ດຸໝັ່ນ ຊື່ສັດ ປະຢັດ ອົດທົນ ພາທຸກຄົນພົ້ນທຸກ**

# ການຈັດຕັ້ງປະຕິບັດວຽກງານຂອງ ທລຍ

ທລຍ ໄດ້ເລີ່ມຈັດຕັ້ງປະຕິບັດໂຄງການໃນຮອບວຽນທີ 1 (ສົກປີ 2003-04) ຢູ່ 10 ເມືອງເປົ້າໝາຍ ຂອງສາມແຂວງທີ່ເລີ່ມຕົ້ນກ່ອນ ເຊິ່ງປະກອບດ້ວຍແຂວງ ຫົວພັນ, ສະຫວັນນະເຂດ ແລະ ຈຳປາສັກເຊິ່ງປະກອບມີ 913 ບ້ານ, 10 ເມືອງ ແລະ 121 ເຂດ ແລະ ຈັດຕັ້ງປະຕິບັດຕົວຈິງຢູ່ 558 ບ້ານ, ທີ່ປະກອບມີພົນລະເມືອງ 138,123 ຄົນຫລືປະມານ 64% ຂອງຈຳນວນທັງໝົດ ມີ 248 ໂຄງການຍ່ອຍຖືກຈັດຕັ້ງປະຕິບັດສຳເລັດ 100%,ໂດຍໃຊ້ງົບປະມານທັງໝົດປະມານ 1,069,934 ໂດລາສະຫະລັດ ຫລື ປະມານ11 ຕື້ກີບ ທຶນປະກອບສ່ວນຂອງຊຸມຊົນມີປະມານ 2,356,366,000 ກີບ ຫລື ປະມານ 20% ຂອງງົບປະມານທັງໝົດ.

ສຳລັບຮອບວຽນສອງ(ສົກປີ 2004-05), ທລຍໄດ້ເຮັດວຽກຢູ່ສາມແຂວງເກົ່າແຕ່ໄດ້ເພີ່ມຈຳນວນເມືອງຂື້ນເປັນ 14 ເມືອງ ປະກອບດ້ວຍ 188 ເຂດ, 1.431 ບ້ານ, ແລະເຮັດວຽກຕົວຈິງຢູ່ 849 ບ້ານ ເຊິ່ງມີພົນລະເມືອງ 389,807 ຄົນ ຫລື ປະມານ 71% ຂອງຈຳນວນພົນທັງໝົດ 549,131 ຄົນ ແລະ ນຳໃຊ້ງົບປະມານ 3.101.000 ໂດລາສະຫະລັດຫລືປະມານ 32 ຕື້ກີບສຳລັບ 431 ໂຄງການ. ສຳລັບຮອບວຽນສອງມີພຽງ 430 ໂຄງການຍ່ອຍຖືກຈັດຕັ້ງປະຕິບັດສຳເລັດຮ້ອຍເປີເຊັນ(ນຶ່ງໂຄງການແມ່ນຖືກໂຈະຄື : ໂຄງການຍົກລະດັບທາງຊົນນະບົດ ເຂດນາທ່າງ ເມືອງວິລະບູລີ ແຂວງສະຫວັນນະເຂດ ເຊິ່ງເສັ້ນທາງດັ່ງກ່າວໄດ້ທຳການກໍ່ສ້າງໄດ້ປະມານ 80% ຂອງໜ້າວຽກ ແລະມີລົດແກ່ໄມ້ມາແລ່ນຢຽບເຮັດໃຫ້ທາງເປ່ເພ້ຜູ້ຮັບເໝົາຂໍຖອນໂຕ ແລະ ບໍ່ສາມາດສືບຕໍ່ການກໍ່ສ້າງໄດ້), ງົບປະມານເກືອບທັງໝົດແມ່ນຖືກໂອນເຂົ້າບັນຊີເຂດຂອງເຂດ ເພື່ອຈັດຕັ້ງປະຕິບັດໂຄງການຍ່ອຍ. ໂຄງການທີ່ຖືກຈັດຕັ້ງປະຕິບັດສ່ວນໃຫ່ຍແມ່ນກິດຈຳກາໜີ່ກ່ຽວຂ້ອງກັບນ້ຳສະອາດ, ການສຶກສາ ແລະ ການຍົກລະດັບທາງຊົນນະບົດຕົ້ນ ທຶນປະກອບ ສ່ວນຂອງຊຸມ ຊົນເພີ່ມຂື້ນເປັນ 6,878,831,000 ກີບ ຫລືປະມານ 21% ຂອງງົບປະມານທັງໝົດ.

ໃນຮອບວຽນ 3 (ປີ 2005-2006) ທລຍ ໄດ້ຂະຫຍາຍກິດຈະກຳໄປສູ່ອີກສູ່ສອງແຂວງໃໝ່ຄື: ຊຽງຂວາງ ແລະ ສາລະວັນ. ໝາຍຄວາມວ່າໃນຮອບວຽນ 3 ທລຍ ໄດ້ເຮັດວຽກຢູ່ 5 ແຂວງທີ່ປະກອບດ້ວຍ 20 ເມືອງ, 239 ເຂດ, ກວມເອົາ 1,913 ບ້ານ. ວຽກງານຕົວຈິງປະຕິບັດຢູ່ 1,283 ບ້ານມີພົນລະເມືອງ 515,876 ຄົນ ຫລືປະມານ 72% ຂອງຈຳນວນທັງໝົດ 718,707 ຄົນ. ງົບປະມານທັງໝົດແມ່ນ 4,163,000 ໂດລາສະຫະລັດຫລື 43 ຕື້ກີບສຳລັບ 533 ໂຄງການຍ່ອຍ, ຮອດທ້າຍເດືອນກັນຍາ ປີ 2006 ມີ 424 ໂຄງ ການຍ່ອຍ ຫລື 80% ຖືກຈັດຕັ້ງປະຕິບັດສຳເລັດຮ້ອຍເປີເຊັນ ແລະ ທຶນ 40 ຕື້ກີບ ຫລື 90 % ຂອງ ງົບປະ ມານ ທັງໝົດຖືກນຳໃຊ້ ແລະ ໂອນເຂົ້າບັນຊີເຂດ. ໂຄງການ ທີ່ຖືກຈັ້ດຕັ້ງປະຕິບັດສ່ວນໃຫ່ຍແມ່ນ ກ່ຽວກັບວຽກງານສຶກສາ ແລະການຍົກລະດັບທາງຊົນນະບົດ. ທຶນປະກອບສ່ວນຂອງ ຊຸມຊົນເພີ່ມຂື້ນເປັນ 9,097,000,000 ກີບ ຫລືປະມານ 21% ຂອງງົບປະມານທັງໝົດ.

ໃນຮອບວຽນທີ 4 ທລຍ ໄດ້ເຮັດວຽກຢູ່ 21 ຕົວເມືອງ, 252 ເຂດ (ກຸ່ມບ້ານ) ເຊິ່ງກວມເອົາຈຳນວນ 1,984 ບ້ານ ແລະ ຈຳນວນພົນລະເມືອງທັງໝົດ744,140 ຄົນ ແລະຈະນຳໃຊ້ທຶນປະມານ 46 ຕື້ກີບ.

ຕາຕະລາງ1: ສະຫລຸບການຈັດຕັ້ງປະຕິດບັດ ໂຄງການຍ່ອຍໃນສາມຮອບວຽນ

| ຂະແໜງການ | ສັງລວມຂໍ້ມູນທັງສາມຮອບວຽນ | | | |
|---|---|---|---|---|
| | ຈ/ນ ໂຄງການຍ່ອຍ | ເປີເຊັນຈ/ນ ໂຄງ ການ ຍ່ອຍ | ງົບປະມານ(ກີບ) | ເປີເຊັນງົບປະມານໃນແຕ່ລະຂະແໜງການ |
| ສຶກສາ | 357 | 29% | 23 536 845 000 | 27% |
| ຄົມມະນາຄົມ | 259 | 21% | 34 054 301 000 | 39% |
| ສາທາ | 377 | 31% | 19 584 534 000 | 23% |
| ກະສິກຳ | 81 | 7% | 4 559 682 000 | 5% |
| ກິດຈະກຳສ້າງລາຍຮັບ | 138 | 11% | 4 655 931 000 | 5% |
| ລວມ | 1212 | 100% | 86 391 292 000 | 100% |

***ໝາຍເຫດ***: ຂໍ້ມູນປັບປຸງຄັ້ງລ້າສຸດວັນທີ 31 ກັນຍາ 2006

## <u>ສະຫລຸບຜົນສຳເລັດຕາມຂະແໜງການ</u>

- ໂຄງການສຶກສາ
  - ✓ ກໍ່ສ້າງ / ສ້ອມແປງໂຮງຮຽນອະນຸບານ,ປະຖົມ, ມັດທະຍົມ 243 ໂຄງການ
  - ✓ ໃຫ້ທຶນຝຶກອົບຮົມຄູ / ເບັຍລ້ຽງຄູ 47 ໂຄງການ
  - ✓ ສະໜອງອຸປະກອນການຮຽນ / ການສອນ 67 ໂຄງ ການ
- ຂະແໜງຄົມມະນາຄົມ ແລະໂຄງລ່າງຂະໜາດນ້ອຍ
  - ✓ ປັບປຸງເສັ້ນທາງຊົນນະບົດ 202 ໂຄງການ (ໄລຍະປະມານ 1,935 ກມ)
  - ✓ ສ້ອມແປງ ແລະກໍ່ສ້າງຂົວຂະໜາດນ້ອຍ 40 ໂຄງການ
  - ✓ ທໍ່ລອດທາງ 4 ໂຄງການ (23 ແຫ່ງ)
  - ✓ ໄຟຟ້າເຂົ້າບ້ານ 13 ໂຄງການ(21ແຫ່ງ)
- ຂະແໜງສາທາລະນະສຸກ
  - ✓ ກໍ່ສ້າງນ້ຳລິນ 195 ໂຄງການ (324 ແຫ່ງ)
  - ✓ ນ້ຳບາດານ-ນ້ຳສ້າງໃສ່ທໍ່ 110 ໂຄງການ (603 ໜ່ວຍ)
  - ✓ ກໍ່ສ້າງສຸກສາລາ/ເຮືອນພັກຄົນເຈັບ/ເຮືອນປະສູດ 22 ໂຄງການ(33 ແຫ່ງ)
  - ✓ ຝຶກອົບຮົມແພດ / ອຸປະກອນການແພດ / ຖົງຢາ 29 ໂຄງການ
  - ✓ ສ້ວມຖ່າຍຈຳນວນ 9 ໂຄງການ ( 394 ໜ່ວຍ) ແລະ ອື່ນໆ 12 ໂຄງການ
- ຂະແໜງກະສິກຳ
  - ✓ ສ້ອມແປງຊົນລະປະທານ 53 ໂຄງການ(60 ແຫ່ງ)
  - ✓ ຝາຍນ້ຳລົ້ນ / ຝາຍກັ້ນນ້ຳ 17 ໂຄງການ
  - ✓ ແລະອື່ນໆ 12 ໂຄງການ(ທໍ່ຊົນລະປະທານ, ສາຍ ສົ່ງນ້ຳ, ຄອງຊົນລະປະທານ)
- ກິດຈະກຳສ້າງລາຍຮັບ(ທັງໝົດ 138 ໂຄງການ)
  - ✓ ຝຶກອົບຮົມວິຊາຊີບ 37 ໂຄງການ( 440 ຄັ້ງ)
  - ✓ ສ້າງກຸ່ມທ້ອນເງີນ 26 ໂຄງການ(ໄດ້ 105 ກຸ່ມ)
  - ✓ ນຳພາປະຊາຊົນປະກາດການຮັກສາປ່າ ແລະ ວັງສະຫງວນ 28 ໂຄງການ(ໄດ້ 233 ແຫ່ງ)
  - ✓ ຝຶກອົບຮົມກິດຈະກຳສ້າງລາຍຮັບ 23 ໂຄງການ
  - ✓ ຝຶກອົບຮົມອື່ນໆ 20 ໂຄງການ

----------------------0--------------------